# NGHỊ ĐỊNH THƯ
## SỬA ĐỔI VÀ BỔ SUNG HIỆP ĐỊNH VỀ QUY CHẾ BIÊN GIỚI QUỐC GIA GIỮA CỘNG HOÀ XÃ HỘI CHỦ NGHĨA VIỆT NAM VÀ CỘNG HOÀ DÂN CHỦ NHÂN DÂN LÀO KÝ NGÀY 1/3/1990.

Chính phủ nước Cộng hoà Xã hội chủ nghĩa Việt Nam và Chính phủ nước Cộng hoà Dân chủ Nhân dân Lào;

Căn cứ khoản a Điều 35 Hiệp định về Quy chế Biên giới Quốc gia giữa Cộng hoà Xã hội chủ nghĩa Việt Nam và Cộng hoà Dân chủ Nhân dân Lào ký ngày 1 tháng 3 năm 1990, đã quy định là Hiệp định có thể sửa đổi và bổ sung theo thoả thuận của hai Bên ký kết, đã quyết định sửa đổi, bổ sung một số điều khoản sau đây:

**Điều 1:**

Bổ sung đoạn sau đây vào cuối khoản a Điều 1

Trường hợp xây dựng lại mốc tại vị trí cũ hoặc tại vị trí mới để thay mốc cũ, cũng như việc thực hiện những công việc xác định đường biên và mốc quốc giới mà Uỷ ban Liên hợp chưa hoàn thành, hai Bên sẽ làm văn bản ghi nhận theo thể thức mà Uỷ ban Liên hợp đã quy định. Theo sự thoả thuận của hai Bên, khi thực hiện những công việc trên, sau khi được sự chấp thuận của Chính phủ hai nước, các văn bản này được coi là phụ lục bổ sung hoặc thay thế các phụ lục cùng tên đính kèm Hiệp ước Hoạch định biên giới Quốc gia ký ngày 18 tháng 7 năm 1977 và Hiệp ước Bổ sung ký ngày 24 tháng 01 năm 1986.

**Điều 2:**

Bổ sung thêm đoạn 3 Điều 2

Hai Bên ký kết có biện pháp kiên quyết ngăn chặn mọi hành động làm thay đổi đường biên giới trên bộ; không cho phép bên nào tuỳ tiện xây dựng thêm bất cứ công trình gì trong phạm vi 100 (một trăm) mét cách đường biên giới về mỗi bên. Nếu Bên nào có nhu cầu xây dựng trong phạm vi nói trên, phải thông báo và trao đổi trước với phía Bên kia trên cơ sở tôn trọng chủ quyền, lợi ích của nhau, phù hợp với các điều kiện và hoàn cảnh thực tế.

**Điều 3**

Khoản a Điều 14 được sửa đổi như sau:

Công dân cư trú trong khu vực biên giới Bên này được phép sang các xã, bản tiếp giáp và lân cận thuộc khu vực biên giới Bên kia để mua bán, trao đổi

hàng hoá cần thiết phục vụ sản xuất và đời sống hàng ngày, thăm viếng người thân, xem phim, xem biểu diễn văn nghệ.

**Điều 4**

Bổ sung thêm khoản c Điều 18

Nếu hai Bên xét thấy cần thiết nâng cửa khẩu phụ thành cửa khẩu chính, từ cửa khẩu chính thành cửa khẩu quốc tế và đổi tên cửa khẩu chính, cửa khẩu quốc tế, hai Bên sẽ trao đổi bằng văn bản qua đường Ngoại giao, khi Chính phủ hai nước chấp thuận mới được tổ chức thực hiện.

**Điều 5**

Bổ sung thêm khoản d Điều 19

Công dân của hai tỉnh có chung đường biên giới được phép sử dụng Giấy thông hành biên giới do Công an cấp tỉnh cấp để qua lại cửa khẩu chính, cửa khẩu quốc tế công tác và thăm viếng hữu nghị. Giấy thông hành biên giới phải ghi rõ mục đích chuyến đi và chỉ có giá trị sử dụng trong phạm vi tỉnh có chung đường biên giới.

**Điều 6**

Khoản a và b Điều 21 được sửa đổi như sau

a) Trường hợp công dân cư trú trong khu vực biên giới Bên này muốn di cư sang khu vực biên giới bên kia phải xin phép chính quyền cấp tỉnh Bên mình. Nếu thấy nguyện vọng của họ là chính đáng, Chính quyền cấp tỉnh của đương sự trao đổi với Chính quyền cấp tỉnh phía Bên kia, rồi báo cáo với cơ quan có thẩm quyền để trình Chính phủ bên mình xem xét quyết định. Sau khi được Chính phủ hai nước chấp nhận thì mới được di cư.

b) Khi một Bên thấy công dân Bên kia tự tiện di cư qua khu vực biên giới Bên mình thì phải thông báo ngay cho Bên kia biết để cùng nhau giải quyết trên cơ sở tôn trọng chủ quyền và pháp luật của mỗi Bên.

**Điều 7**

Khoản a Điều 27 được sửa đổi như sau

Việc thăm dò địa chất và khai khoáng trong khu vực biên giới chỉ được tiến hành trên lãnh thổ Bên mình. Khi một Bên có nhu cầu tiến hành thăm dò địa chất và khai khoáng trong phạm vi cách đường biên giới về phía mỗi Bên 500 (năm trăm) mét, phải thông báo và trao đổi với phía Bên kia trước trên cơ sở tôn trọng chủ quyền, lợi ích của nhau, phù hợp với điều kiện và hoàn cảnh thực tế.

Việc khai thác các mỏ khoáng sản nằm trên đường biên giới cần phải có sự thoả thuận và được phép của Chính phủ hai nước.

**Điều 8**

Điều 29 được điều chỉnh và bổ sung như sau

Mỗi bên ký kết phải kiên quyết xử lý theo pháp luật của Bên mình đối với những người có hành động sai trái và người vi phạm Hiệp định về Quy chế biên giới Quốc gia giữa hai nước.

Đối với những người vi phạm Quy chế qua lại biên giới, nếu là công dân của Bên nào thì trao cho Bên đó xử lý, trừ những trường hợp phạm pháp về hình sự.

Khi giao nhận những người có hành động sai trái và người vi phạm nói trên phải lập biên bản ghi nhận hành động vi phạm của đương sự, về tang vật thì xử lý theo pháp luật của Bên bắt giữ.

**Điều 9**

Nghị định thư này sẽ có hiệu lực kể từ ngày hai Bên trao đổi Công hàm qua đường Ngoại giao thông báo về việc hoàn tất các thủ tục pháp lý cần thiết của hai Bên ký kết.

Làm tại thành phố Huế, tỉnh Thừa Thiên - Huế ngày 31 tháng 8 năm 1997 thành hai bản bằng tiếng Việt và tiếng Lào. Hai văn bản đều có giá trị như nhau.

| | |
|---|---|
| THAY MẶT CHÍNH PHỦ<br>CỘNG HOÀ XÃ HỘI CHỦ NGHĨA<br>VIỆT NAM | THAY MẶT CHÍNH PHỦ<br>CỘNG HOÀ DÂN CHỦ NHÂN DÂN<br>LÀO |

# ອະນຸສັນຍາ
# ດັດແກ້ ແລະ ເພີ້ມເຕີມສັນຍາວ່າດ້ວຍລະບຽບການຊາຍແດນ ປະເທດ ລະຫວ່າງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ
# ສະບັບ ວັນທີ 1 ມີນາ 1990

---

ລັດຖະບານແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແລະ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ;

ອີງຕາມ ມາດຕາ 35, ຂໍ້ ກ ຂອງສັນຍາວ່າດ້ວຍລະບຽບການຊາຍແດນ ປະເທດ ລະຫວ່າງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ສະບັບລົງວັນທີ 1 ມີນາ 1990 ຊຶ່ງກຳນົດວ່າສັນຍາ ອາດຈະໄດ້ຮັບການດັດແກ້ ແລະ ເພີ້ມເຕີມຕາມການຕົກລົງ ຂອງຄູ່ສັນຍາ, ໄດ້ຕົກລົງດັດແປງ ແລະ ເພີ້ມເຕີມບາງມາດຕາດັ່ງຕໍ່ໄປນີ້:

## ມາດຕາ1

## ເພີ້ມເຕີມໃສ່ທ້າຍຂອງຂໍ້ -ກ ມາດຕາ 1

ໃນກໍລະນີມີການກໍ່ສ້າງຫລັກໝາຍໃຫມ່ຢູ່ໃນບ່ອນເກົ່າ ຫລື ໃນບ່ອນໃຫມ່ກໍ່ຕາມ ເພື່ອປ່ຽນແທນຫລັກໝາຍເກົ່າ, ກໍ່ຄືການປະຕິບັດບັນດາວຽກງານທີ່ຢັ້ງຢືນເສັ້ນຊາຍແດນ ແລະ ຫລັກໝາຍຊາຍແດນທີ່ຄະນະກຳມະການປະສົມເຮັດຍັງບໍ່ທັນສຳເລັດ, ທັງສອງຝ່າຍ ຈະເຮັດ ເອກກະສານບັນທຶກຂໍ້ມູນລະອຽດຕ່າງໆ ຕາມລະບຽບການທີ່ຄະນະກຳມະການປະສົມໄດ້ກຳນົດໄວ້. ຕາມ ການຕົກລົງຂອງ ສອງຝ່າຍໃນເວລາປະຕິບັດ ບັນດາວຽກງານທີ່ກ່າວມາຂ້າງເທິງ, ພາຍຫລັງໄດ້ຮັບການຮັບຮອງ ຈາກລັດຖະບານ ສອງປະເທດແລ້ວ ໃຫ້ຖືວ່າບັນດາເອກກະສານດັ່ງກ່າວນີ້ ເປັນເອກກະສານເພີ້ມເຕີມທີ່ຕິດແນບ ຫລື ປ່ຽນແທນບັນດາສາລະບານ ທີ່ມີຢູ່ຄືກັນ ຕິດແນບສົນທິສັນຍາວ່າດ້ວຍການກຳນົດເສັ້ນຊາຍແດນປະເທດ ທີ່ໄດ້ເຊັນກັນໃນວັນທີ 18 / 7 / 1977 ແລະ ສົນທິສັນຍາເພີ້ມເຕີມທີ່ໄດ້ເຊັນກັນໃນວັນທີ 24 / 1 / 1986.

## ມາດຕາ 2

### ເພີ້ມເຕີມ ເປັນວັກ 3 ມາດຕາ 2

ຄູ່ສັນຍາ ຕ້ອງມີວິທີການສະກັດກັ້ນ ຢ່າງເດັດຂາດ ທຸກການກະທຳ ທີ່ພາໃຫ້ເສັ້ນຊາຍແດນ ທາງບົກມີການປ່ຽນແປງ; ບໍ່ອະນຸຍາດໃຫ້ຝ່າຍໃດຝ່າຍໜຶ່ງປຸກສ້າງກິດຈະການໃດໆຕື່ມຕາມລຳພັງ ໃຈໃນຂອບເຂດ 100 (ໜຶ່ງຮ້ອຍ) ແມັດ ຫ່າງຈາກເສັ້ນຊາຍແດນ ຂອງ ແຕ່ລະເບື້ອງ. ຖ້າຫາກວ່າ ຝ່າຍໃດ ຝ່າຍຫນຶ່ງ ມີຄວາມຈຳເປັນ ຢາກປຸກສ້າງກິດຈະການໃດໜຶ່ງ ຢູ່ໃນຂອບເຂດດັ່ງກ່າວນັ້ນ ຕ້ອງແຈ້ງ ແລະ ປຶກສາຫາລື ກັບ ອີກຝ່າຍໜຶ່ງກ່ອນ ບົນພື້ນຖານເຄົາລົບສິດອຳນາດອະທິປະໄຕ,ຜົນ ປະໂຫຍດຂອງກັນ ແລະ ກັນ,ໂດຍສອດຄ່ອງກັບເງື່ອນໄຂຂອງສະພາບພື້ນທີ່ຕົວຈິງ.

## ມາດຕາ 3

### ດັດແປງ ຂໍ້-ກ ມາດຕາ 14

ພົນລະເມືອງທີ່ຕັ້ງພູມລຳເນົາຢູ່ໃນເຂດຊາຍແດນຝ່າຍນີ້ ໄດ້ຮັບອະນຸຍາດໃຫ້ຂ້າມຜ່ານຊາຍ ແດນໄປຝ່າຍນັ້ນ ໃນຂອບເຂດບ້ານ,ຕາແສງທີ່ມີຊາຍແດນຕິດກັນ ແລະ ໃກ້ຄຽງກັນເພື່ອຊື້ຂາຍ ແລະ ແລກປ່ຽນສິນຄ້າທີ່ຈຳເປັນຮັບໃຊ້ໃຫ້ແກ່ການຜະລິດ ແລະ ການດຳລົງຊີວິດປະຈຳວັນ, ການ ຢ້ຽມຢາມພີ່ນ້ອງ,ຊົມຮູບເງົາ, ຊົມສິນລະປະວັນນະຄະດີ.

## ມາດຕາ 4

### ເພີ້ມເຕີມເປັນຂໍ້ -ຄ ມາດຕາ 18

ຖ້າທັງສອງຝ່າຍຕ້ອງການຈະຍົກລະດັບດ່ານສຳຮອງຂຶ້ນເປັນດ່ານສຳຄັນ, ຈາກດ່ານສຳຄັນ ຂຶ້ນເປັນດ່ານສາກົນ ແລະ ປ່ຽນຊື່ດ່ານສຳຄັນ,ດ່ານສາກົນ ສອງຝ່າຍຈະແລກປ່ຽນເອກກະສານນຳກັນ ໂດຍຜ່ານທາງການທູດ, ເມື່ອໃດໄດ້ຮັບການຕົກລົງເຫັນດີຈາກລັດຖະບານຂອງທັງສອງປະເທດແລ້ວ ຈຶ່ງໄດ້ຈັດຕັ້ງປະຕິບັດ.

## ມາດຕາ 5

### ເພີ້ມເຕີມເປັນຂໍ້-ງ ມາດຕາ 19

ພົນລະເມືອງ ຂອງ ສອງແຂວງ ທີ່ມີເສັ້ນຊາຍແດນຕິດຈອດກັນ ສາມາດໃຊ້ໃບຜ່ານແດນທີ່ ອອກໃຫ້ໂດຍເຈົ້າໜ້າທີ່ຕຳຫລວດຂັ້ນແຂວງ ໃນການຂ້າມຜ່ານດ່ານສຳຄັນ, ດ່ານສາກົນ ເພື່ອປະຕິ ບັດວຽກງານ ແລະ ຢ້ຽມຢາມມິດຕະພາບ. ໃບຜ່ານແດນຕ້ອງບອກແຈ້ງຈຸດປະສົງຂອງການໄປ ແລະ ມີຄຸນຄ່າໃຊ້ພາຍໃນຂອບເຂດ ແຂວງຊາຍແດນ ທີ່ມີຊາຍແດນຮ່ວມກັນ.

## ມາດຕາ 6

## ດັດແປງຂໍ້-ກ ແລະ ຂ ມາດຕາ 21

ກ./ ກໍລະນີທີ່ ພົນລະເມືອງເຂດຊາຍແດນເບື້ອງໜຶ່ງ ຢາກຍົກຍ້າຍ ໄປຢູ່ເຂດຊາຍແດນອີກເບື້ອງໜຶ່ງນັ້ນ ຕ້ອງຂໍອະນຸຍາດ ຈາກອຳນາດການປົກຄອງຂັ້ນແຂວງຂອງຕົນ. ຖ້າເຫັນວ່າຄວາມມຸ້ງຫວັງຂອງເຂົາເຈົ້າຫາກສົມເຫດສົມຜົນ, ອົງການປົກຄອງຂັ້ນແຂວງ ຂອງຜູ້ກ່ຽວຕ້ອງປຶກສາຫາລືກັບອົງການປົກຄອງຂັ້ນແຂວງອີກຝ່າຍໜຶ່ງ, ແລ້ວລາຍງານຕໍ່ອົງການທີ່ມີສິດກ່ຽວຂ້ອງເພື່ອນຳສະເໜີຕໍ່ລັດຖະບານຂອງຕົນພິຈາລະນາອະນຸມັດ. ພາຍຫລັງ ທີ່ໄດ້ຮັບການອະນຸມັດ ຈາກລັດຖະບານທັງສອງປະເທດແລ້ວ ຈຶ່ງຍົກຍ້າຍໄດ້.

ຂ./ ເມື່ອຝ່າຍໃດຝ່າຍໜຶ່ງ ຫາກພົບເຫັນ ພົນລະເມືອງ ຂອງອີກຝ່າຍໜຶ່ງຍົກຍ້າຍຂ້າມຊາຍແດນ ໄປຕັ້ງພູມລຳເນົາ ຢູ່ອີກເບື້ອງໜຶ່ງຕາມລຳພັງໃຈ ຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຊາບໂດຍດ່ວນ ເພື່ອຮ່ວມກັນແກ້ໄຂ ບົນພື້ນຖານ ເຄົາລົບສິດອຳນາດອະທິປະໄຕ ແລະ ລະບຽບກົດໝາຍຂອງແຕ່ລະຝ່າຍ.

## ມາດຕາ 7

## ດັດແປງ ຂໍ້-ກ ມາດຕາ 27

ການສຳຫລວດທໍລະນີສາດ ແລະ ຂຸດຄົ້ນບໍ່ແຮ່ໃນຂອບເຂດຊາຍແດນ ແມ່ນໃຫ້ດຳເນີນພຽງແຕ່ຢູ່ເທິງດິນແດນຂອງຝ່າຍຕົນ. ເມື່ອຝ່າຍໃດໜຶ່ງມີຄວາມຕ້ອງການສຳຫລວດທໍລະນີສາດ ແລະ ຂຸດຄົ້ນບໍ່ແຮ່ໃນຂອບເຂດທີ່ຫ່າງຈາກເສັ້ນຊາຍແດນເບື້ອງລະ 500 (ຫ້າຮ້ອຍ )ແມັດ ຕ້ອງແຈ້ງ ແລະ ປຶກສາຫາລືກັບອີກຝ່າຍໜຶ່ງກ່ອນ ບົນພື້ນຖານເຄົາລົບສິດອຳນາດອະທິປະໄຕ, ຜົນປະໂຫຍດຂອງກັນ ແລະ ກັນ ແລະ ໃຫ້ເໝາະສົມກັບເງື່ອນໄຂ, ສະພາບຕົວຈິງ. ການຂຸດຄົ້ນບັນດາບໍ່ແຮ່ທີ່ນອນຢູ່ເທິງເສັ້ນຊາຍແດນຕ້ອງມີການຕົກລົງ ແລະ ໄດ້ຮັບການອະນຸຍາດຈາກລັດຖະບານທັງສອງປະເທດ.

## ມາດຕາ 8

## ດັດແປງ ແລະ ເພີ້ມເຕີມ ມາດຕາ 29

ຄູ່ສັນຍາຕ້ອງໃຊ້ມາດຕະການອັນເດັດຂາດ ຕາມລະບຽບກົດໝາຍຂອງຝ່າຍຕົນຕໍ່ຜູ້ທີ່ກະທຳຜິດ ແລະ ຜູ້ລະເມີດສັນຍາ ວ່າດ້ວຍລະບຽບການຊາຍແດນ ປະເທດ ລະຫວ່າງ ສອງປະເທດ.

ສຳຫລັບຜູ້ທີ່ລະເມີດ ລະບຽບການເຂົ້າ-ອອກຜ່ານຊາຍແດນ, ຖ້າແມ່ນພົນລະເມືອງຂອງຝ່າຍໃດຕ້ອງສົ່ງໃຫ້ຝ່າຍນັ້ນແກ້ໄຂ, ຍົກເວັ້ນກໍລະນີລະເມີດກົດໝາຍອາຍາ.

ການມອບຮັບຜູ້ກະທຳຜິດ ແລະ ຜູ້ລະເມີດດັ່ງກ່າວ ຕ້ອງເຮັດບົດບັນທຶກ ເພື່ອບັນທຶກໄວ້ການກະທຳຜິດຂອງຜູ້ກ່ຽວ, ສຳລັບຫລັກຖານຂອງການ ຕ້ອງແກ້ໄຂ ຕາມລະບຽບກົດໝາຍຂອງຝ່າຍຈັບ.

## ມາດຕາ 9

ອະນຸສັນຍາສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ທີ່ມີການແລກປ່ຽນ ເອກກະສານ ທີ່ເປັນລາຍລັກອັກສອນ ຜ່ານທາງການທູດ ແຈ້ງໃຫ້ກັນຊາບ ກ່ຽວກັບການສຳເລັດ ທຸກຂັ້ນຕອນທີ່ຈຳເປັນ ຂອງຄູ່ສັນຍາ.

ເຮັດທີ່ ນະຄອນ ເຫວ້ ແຂວງ ເທື່ອ ທຽນ ເຫວ້, ວັນທີ 31 ສິງຫາ 1997 ເປັນສອງສະບັບຕົ້ນ, ດ້ວຍ ສອງພາສາ, ພາສາ ຫວຽດນາມ ແລະ ພາສາລາວ, ທັງສອງສະບັບ ມີຄຸນຄ່າເທົ່າທຽມກັນ.

| | |
|---|---|
| ຕາງໜ້າລັດຖະບານ | ຕາງໜ້າລັດຖະບານ |
| ສາທາລະນະລັດ | ສາທາລະນະລັດ ປະຊາທິປະໄຕ |
| ສັງຄົມນິຍົມ ຫວຽດນາມ | ປະຊາຊົນ ລາວ |